ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 02 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 07 JUN 2021

# ຄຳແນະນຳ

# ວ່າດ້ວຍການຈ່າຍປັນຜົນຂອງບໍລິສັດຈົດທະບຽນ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາຄຳແນະນຳວ່າດ້ວຍ ການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ສະບັບເລກທີ 11/ຄຄຊ, ລົງວັນທີ 26 ເມສາ 2019.

**ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອອກຄຳແນະນຳ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຄຳແນະນຳສະບັບນີ້ກຳນົດ ຫຼັກການ, ວິທີການ, ຂັ້ນຕອນ, ກຳນົດເວລາ, ການພິຈາລະນາ ແລະ ກົນໄກລະອຽດໃນການຈັດຕັ້ງປະຕິບັດ ກ່ຽວກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ເພື່ອອຳນວຍຄວາມສະດວກ ແລະ ທັງເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງໃຫ້ແກ່ບໍລິສັດຈົດທະບຽນ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດໃນການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ມີປະສິດທິພາບ, ໂປ່ງໃສ ແລະ ທັນເວລາ.

**ມາດຕາ 2 ການຈ່າຍປັນຜົນ**

ການຈ່າຍປັນຜົນ ແມ່ນການແບ່ງປັນຜົນກຳໄລສຸດທິບາງສ່ວນ ຈາກການດຳເນີນທຸລະກິດຂອງບໍລິສັດຈົດທະບຽນ ໃຫ້ແກ່ຜູ້ຖືຮຸ້ນທີ່ມີສິດໄດ້ຮັບການປັນຜົນ ຕາມທີ່ໄດ້ກຳນົດໄວ້ ກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ ເປັນເງິນສົດ ຫຼື ເປັນຮຸ້ນ (ຮຸ້ນປັນຜົນ) ເພື່ອແບ່ງປັນໃຫ້ຜູ້ລົງທຶນ ຕາມອັດຕາສ່ວນທີ່ໄດ້ຮັບການຕົກລົງເຫັນດີຂອງ ກອງປະຊຸມຜູ້ຖືຮຸ້ນ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນ ຄຳແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເງິນປັນຜົນ** ໝາຍເຖິງ ການປັນຜົນເປັນເງິນ ໂດຍການນຳເອົາກຳໄລສຸດທິ ຫຼື ກຳໄລສະສົມບາງສ່ວນຂອງບໍລິສັດຈົດທະບຽນ ມາແບ່ງປັນໃຫ້ຜູ້ຖືຮຸ້ນ ຕາມນະໂຍບາຍການຈ່າຍປັນຜົນ ແລະ ການເຫັນດີຈາກຂອງກອງປະຊຸມຜູ້ຖືຮຸ້ນ;

2. **ຮຸ້ນປັນຜົນ** ໝາຍເຖິງ ການປັນຜົນເປັນຮຸ້ນຂອງ ບໍລິສັດຈົດທະບຽນ ທີ່ມີການອອກຮຸ້ນເພີ່ມທຶນຕາມການເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ;

3. **ບໍລິສັດຈົດທະບຽນ** ໝາຍເຖິງ ບໍລິສັດທີ່ນຳເອົາຮຸ້ນຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ;

4. **ຜູ້ຖືຮຸ້ນທີ່ມີສິດໄດ້ຮັບການປັນຜົນ** ໝາຍເຖິງ ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ທີ່ມີສິດໄດ້ຮັບການປັນຜົນ ຕາມການກຳນົດຂອງ ສະພາບໍລິຫານ ແລະ ລະບຽບການທີ່ກ່ຽວຂ້ອງ;

5. **ກຳໄລສຸດທິ** ໝາຍເຖິງ ລາຍຮັບພາຍຫຼັງຫັກ ຕົ້ນທຶນ, ຄ່າສິ້ນເປືອງ ແລະ ລາຍຈ່າຍຕ່າງໆອອກແລ້ວ;

6. **ຮຸ້ນເສດ** ໝາຍເຖິງ ຈຳນວນຮຸ້ນທີ່ຕ່ຳກວ່າຫົວໜ່ວຍຊື້ ຂາຍຕ່ຳສຸດ ຕາມການກຳນົດຂອງຕະຫຼາດຫຼັກຊັບ.

ມາດຕາ 4 ຫຼັກການ

ການຈ່າຍປັນຜົນຂອງ ບໍລິສັດຈົດທະບຽນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
2. ຕ້ອງມີມະຕິຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນ;
3. ຮັບປະກັນໃຫ້ມີ ຄວາມໂປ່ງໃສ, ວ່ອງໄວ ແລະ ທັນເວລາ.

ມາດຕາ 5 ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບ ບໍລິສັດຈົດທະບຽນ, ຜູ້ຖືຮຸ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ.

## ໝວດທີ 2
## ການກຳນົດກ່ຽວກັບນະໂຍບາຍການຈ່າຍປັນຜົນ ຂອງບໍລິສັດຈົດທະບຽນ

ມາດຕາ 6 ປັດໄຈກ່ຽວກັບການກຳນົດນະໂຍບາຍການຈ່າຍປັນຜົນ

ສະພາບໍລິຫານຂອງບໍລິສັດຈົດທະບຽນ ຕ້ອງຄົ້ນຄວ້າກຳນົດ ກ່ຽວກັບນະໂຍບາຍການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ໂດຍອີງໃສ່ປັດໄຈຄື: ກຳໄລສຸດທິ, ແຜນການດຳເນີນທຸລະກິດໃນປີຕໍ່ໜ້າ, ນະໂຍບາຍການຈ່າຍປັນຜົນຕາມການກຳນົດຂອງຂະແໜງການ ແລະ ປັດໃຈອື່ນໆ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ.

ສຳລັບ ມູນຄ່າປັນຜົນທີ່ຈະຈ່າຍ ບໍ່ຄວນຫຼຸດ ຫ້າສິບ ສ່ວນຮ້ອຍ (50%) ຂອງກຳໄລສຸດທິ ພາຍຫຼັງຫັກເຂົ້າຄັງສຳຮອງຕາມລະບຽບການ.

**ມາດຕາ 7 ການປ່ຽນແປງກ່ຽວກັບນະໂຍບາຍການຈ່າຍປັນຜົນຂອງບໍລິສັດຈົດທະບຽນ**

ການປ່ຽນແປງ ກ່ຽວກັບນະໂຍບາຍການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ.

## ໝວດທີ 3
## ຮູບແບບ, ຂັ້ນຕອນການຄົ້ນຄວ້າ, ວິທີການ, ກຳນົດເວລາ ແລະ ການເປີດເຜີຍຂໍ້ມູນ ກ່ຽວກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ

**ມາດຕາ 8 ຮູບແບບການຈ່າຍປັນຜົນ**

ການຈ່າຍປັນຜົນຂອງ ບໍລິສັດຈົດທະບຽນ ປະກອບມີ 3 ຮູບແບບຄື:

1. ຈ່າຍເງິນປັນຜົນ;
2. ຈ່າຍຮຸ້ນປັນຜົນ;
3. ຈ່າຍເງິນປັນຜົນ ແລະ ຮຸ້ນປັນຜົນ ຄວບຄູ່ກັນ.

ການອອກຈຳໜ່າຍຮຸ້ນເພີ່ມທຶນ ເພື່ອນຳເອົາຮຸ້ນດັ່ງກ່າວມາປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຕ້ອງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 9 ເອກະສານປະກອບການອອກຈຳໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍຮຸ້ນປັນຜົນ**

ບໍລິສັດຈົດທະບຽນ ຕ້ອງປະກອບເອກະສານເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາກົດລະບຽບຂອງບໍລິສັດ;
4. ສຳເນົາມະຕິກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບແຜນການອອກຈຳໜ່າຍຮຸ້ນເພີ່ມທຶນເພື່ອປັນຜົນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້;
5. ບັນຊີລາຍຊື່ຜູ້ຖືຮຸ້ນທີ່ມີສິດໄດ້ຮັບການປັນຜົນ;
6. ແຜນການຈັດສັນຮຸ້ນ
7. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 ການພິຈາລະນາການອອກຈຳໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍຮຸ້ນປັນຜົນ**

ການພິຈາລະນາການອອກຈຳໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍຮຸ້ນປັນຜົນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 18.

**ມາດຕາ 11 ຂັ້ນຕອນການຄົ້ນຄວ້າການຈ່າຍປັນຜົນຂອງບໍລິສັດຈົດທະບຽນ**

ການຄົ້ນຄວ້າ ກ່ຽວກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ໃຫ້ປະຕິບັດຕາມນະໂຍບາຍການຈ່າຍປັນຜົນ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບ ຫຼື ໜັງສືຊວນຊື້ ຂອງບໍລິສັດຈົດທະບຽນ ໂດຍໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ບໍລິສັດຈົດທະບຽນ ອອກໜັງສືເຖິງຜູ້ຖືຮຸ້ນເພື່ອຂໍ ຄໍາເຫັນ ຫຼື ຂໍ້ສະເໜີ ກ່ຽວກັບການຈ່າຍປັນຜົນ;

2. ສະມາຊິກອິດສະລະ ຄົ້ນຄວ້າພິຈາລະນາ ກ່ຽວກັບ ຄໍາເຫັນ ຫຼື ຂໍ້ສະເໜີ ຂອງຜູ້ຖືຮຸ້ນ ກ່ຽວກັບການຈ່າຍປັນຜົນເພື່ອສະເໜີຕໍ່ ສະພາບໍລິຫານ ພິຈາລະນາ;

3. ຄະນະອໍານວຍການຂອງບໍລິສັດຈົດທະບຽນຄົ້ນຄວ້າ ກ່ຽວກັບແຜນການຈ່າຍປັນຜົນເພື່ອສະເໜີຕໍ່ ສະພາບໍລິຫານ ພິຈາລະນາ;

4. ສະພາບໍລິຫານຂອງບໍລິສັດຈົດທະບຽນ ພິຈາລະນາ ກ່ຽວກັບການຈ່າຍປັນຜົນ ຕາມການສະເໜີຂອງ ຄະນະອໍານວຍການ ແລະ ສະມາຊິກອິດສະລະ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ. ກໍລະນີ ຈ່າຍປັນຜົນເປັນຮຸ້ນ ກອງປະຊຸມຜູ້ຖືຮຸ້ນ ຕ້ອງພິຈາລະນາຮັບຮອງ ກ່ຽວກັບການອອກຈໍາໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍປັນຜົນເປັນຮຸ້ນ;

5. ບໍລິສັດຈົດທະບຽນ ຕ້ອງເປີດເຜີຍມະຕິຂອງສະພາບໍລິຫານ ກ່ຽວກັບການຈ່າຍປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຢ່າງໜ້ອຍ 14 ວັນ ກ່ອນເຖິງວັນກໍານົດສິດໄດ້ຮັບປັນຜົນ.

ສໍາລັບ ການຈ່າຍຮຸ້ນປັນຜົນຂອງບໍລິສັດຈົດທະບຽນ ນອກຈາກຂັ້ນຕອນທີ່ໄດ້ກໍານົດໄວ້ໃນ ວັກໜຶ່ງຂອງມາດຕານີ້ ແມ່ນໃຫ້ປະຕິບັດຕາມຂັ້ນຕອນເພີ່ມເຕີມ ດັ່ງນີ້:

1. ພາຍຫຼັງໄດ້ຮັບມະຕິຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນ ບໍລິສັດຈົດທະບຽນ ຕ້ອງສະເໜີຂໍອອກຈໍາໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍປັນຜົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ກອງປະຊຸມຜູ້ຖືຮຸ້ນ ມີມະຕິຮັບຮອງ ເປັນຕົ້ນໄປ;

2. ພາຍຫຼັງໄດ້ຮັບອະນຸຍາດໃຫ້ອອກຈໍາໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍປັນຜົນ ບໍລິສັດຈົດທະບຽນ ຕ້ອງດໍາເນີນການຈັດສັນຮຸ້ນອອກໃໝ່ເພື່ອຈ່າຍປັນຜົນເປັນຮຸ້ນ ພາຍໃນເວລາ 3 ວັນ ລັດຖະການ;

3. ລາຍງານຜົນການຈັດສັນຮຸ້ນດັ່ງກ່າວໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 1 ວັນລັດຖະການ ນັບແຕ່ວັນສໍາເລັດການຈັດສັນຮຸ້ນ ເປັນຕົ້ນໄປ;

4. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ອອກໜັງສືຢັ້ງຢືນ ກ່ຽວກັບຜົນການຈັດສັນຮຸ້ນປັນຜົນ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານ ເປັນຕົ້ນໄປ ເພື່ອນໍາໃຊ້ເປັນບ່ອນອີງໃນການເພີ່ມທຶນ;

5. ຂຶ້ນທະບຽນເພີ່ມທຶນກັບ ກະຊວງອຸດສາຫະກໍາ ແລະ ການຄ້າ;

6. ນໍາສະເໜີຕໍ່ ຕະຫຼາດຫຼັກຊັບ ເພື່ອ ຝາກຮຸ້ນ, ຈັດສັນຮຸ້ນເຂົ້າບັນຊີຫຼັກຊັບຂອງຜູ້ລົງທຶນ, ຈົດທະບຽນຮຸ້ນ ແລະ ກໍານົດມື້ຊື້ ຂາຍຮຸ້ນ ຕາມລະບຽບການຂອງ ຕະຫຼາດຫຼັກຊັບ ກໍານົດ.

**ມາດຕາ 12 ວິທີການຈ່າຍປັນຜົນຂອງບໍລິສັດຈົດທະບຽນ**

ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ ແມ່ນໃຫ້ປະຕິບັດຕາມວິທີການ ດັ່ງນີ້:

ການຈ່າຍປັນຜົນເປັນເງິນຂອງບໍລິສັດຈົດທະບຽນ ແມ່ນໃຫ້ຈ່າຍໂດຍແບ່ງຕາມຈໍານວນຮຸ້ນ ໃນອັດຕາເທົ່າກັນ ແລະ ໂອນເຂົ້າບັນຊີຫຼັກຊັບຂອງ ຜູ້ຖືຮຸ້ນ.

ສໍາລັບ ການຈ່າຍປັນຜົນເປັນຮຸ້ນຂອງບໍລິສັດຈົດທະບຽນ ແມ່ນໃຫ້ອີງໃສ່ກໍາໄລສຸດທິທີ່ຈະປັນ ຫານໃຫ້ມູນຄ່າກໍານົດ (Par Value) ແລະ ນໍາເອົາຈໍານວນຮຸ້ນດັ່ງກ່າວ ມາຈັດສັນຕາມສັດສ່ວນຮຸ້ນທີ່ຜູ້ຖືຮຸ້ນຖືຄອງ. ກໍລະນີ ພາຍຫຼັງການຈັດສັນນັ້ນຫາກມີຮຸ້ນເສດ ຕໍ່າກວ່າຫົວໜ່ວຍຊື້ ຂາຍຕໍ່າສຸດ ຕາມການກໍານົດຂອງຕະຫຼາດຫຼັກຊັບ ແມ່ນໃຫ້ຕະຫຼາດຫຼັກຊັບ ອອກລະບຽບການໃນການຈັດຕັ້ງປະຕິບັດການຈັດສັນຮຸ້ນເສດດັ່ງກ່າວ.

**ມາດຕາ 13 ກຳນົດເວລາຂອງການຈ່າຍປັນຜົນຂອງບໍລິສັດຈົດທະບຽນ**

ບໍລິສັດຈົດທະບຽນ ຕ້ອງຈ່າຍປັນຜົນໃຫ້ແກ່ຜູ້ຖືຮຸ້ນ ພາຍໃນເວລາ 30 ວັນ ນັບແຕ່ວັນທີ່ມີມະຕິຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນໄປ.

**ມາດຕາ 14 ການເປີດເຜີຍຂໍ້ມູນກ່ຽວກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ**

ບໍລິສັດຈົດທະບຽນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບການຈ່າຍປັນຜົນ ດັ່ງນີ້:

1. ນະໂຍບາຍການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບ ແລະ ໜັງສືຊວນຊື້ຂອງບໍລິສັດ;

2. ຂັ້ນຕອນການຄົ້ນຄວ້າການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຄຳແນະນຳສະບັບນີ້;

3. ແຜນການຈ່າຍປັນຜົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ວັກໜຶ່ງ ຂໍ້ 3 ຂອງຄຳແນະນຳສະບັບນີ້. ກໍລະນີຈ່າຍປັນຜົນເປັນຮຸ້ນ ຕ້ອງປະກອບມີເນື້ອໃນຕົ້ນຕໍຄື: ເຫດຜົນ, ຄວາມຈຳເປັນ, ແຜນການນຳໃຊ້ທຶນຈາກການອອກຈຳໜ່າຍຮຸ້ນເພີ່ມທຶນເພື່ອຈ່າຍປັນຜົນເປັນຮຸ້ນ, ປັດໃຈຄວາມສ່ຽງທີ່ກ່ຽວຂ້ອງ ແລະ ຄວາມເໝາະສົມ ກ່ຽວກັບການຈ່າຍປັນຜົນເປັນຮຸ້ນ ແລະ ເນື້ອໃນອື່ນ;

4. ຄຳເຫັນຂອງ ສະມາຊິກອິດສະລະ ກ່ຽວກັບການຈ່າຍປັນຜົນ;

5. ຄຳເຫັນ ຫຼື ຂໍ້ສະເໜີ ຂອງຜູ້ຖືຮຸ້ນ ກ່ຽວກັບການຈ່າຍປັນຜົນ (ຖ້າມີ).

ກໍລະນີ ບໍ່ຈ່າຍປັນຜົນ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບ ສາເຫດ ຫຼື ຄວາມຈຳເປັນ ແລະ ແຜນການນຳໃຊ້ເງິນ ບ້ອງທີ່ບໍ່ຈ່າຍປັນຜົນ ໃຫ້ຜູ້ຖືຮຸ້ນຊາບ ຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນເວລາ 24 ຊົ່ວໂມງ ພາຍຫຼັງສິ້ນສຸດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ພ້ອມທັງລາຍງານ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 4
## ສິດ ແລະ ໜ້າທີ່ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ຜູ້ຖືຮຸ້ນ

**ມາດຕາ 15 ສິດ ແລະ ໜ້າທີ່ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມການປະຕິບັດໜ້າທີ່ຂອງ ສະມາຊິກອິດສະລະ ແລະ ການພິຈາລະນາຈ່າຍປັນຜົນຂອງສະພາບໍລິຫານ;

2. ຕິດຕາມການພິຈາລະນາຂອງກອງປະຊຸມຜູ້ຖືຮຸ້ນ ກ່ຽວກັບການຈ່າຍປັນຜົນ;

3. ຕິດຕາມການຈ່າຍປັນຜົນໃຫ້ແກ່ຜູ້ຖືຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ;

4. ຕິດຕາມການນຳໃຊ້ເງິນບ້ອງທີ່ບໍ່ຈ່າຍປັນຜົນຂອງ ບໍລິສັດຈົດທະບຽນ;

5. ຕິດຕາມ ແລະ ຊຸກຍູ້ ການລາຍງານຂໍ້ມູນ ກ່ຽວກັບການຈ່າຍປັນຜົນ ຕາມທີ່ໄດ້ກຳນົດໄວ້ໃນ ຄຳແນະນຳສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງ ຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບຽບການ ໃນການຜັນຂະຫຍາຍຄຳແນະນຳສະບັບນີ້ ເພື່ອຮອງຮັບໃຫ້ແກ່ການຈ່າຍປັນຜົນຂອງບໍລິສັດຈົດທະບຽນ;

2. ສ້າງລະບົບ ແລະ ກົນໄກຕ່າງໆ ທີ່ກ່ຽວຂ້ອງເພື່ອຮອງຮັບໃຫ້ແກ່ການຈັດຕັ້ງປະຕິບັດການຈ່າຍປັນຜົນ;

3. ຕິດຕາມ ແລະ ຊຸກຍູ້ ການເປີດເຜີຍຂໍ້ມູນ ກ່ຽວກັບການຈ່າຍປັນຜົນ ຕາມທີ່ໄດ້ກຳນົດໄວ້ໃນ ຄຳແນະນຳສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງ ບໍລິສັດຈົດທະບຽນ**

ບໍລິສັດຈົດທະບຽນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງຄູ່ມື ເພື່ອເປັນບ່ອນອີງໃນການຈັດຕັ້ງ ກ່ຽວກັບການຈ່າຍປັນຜົນ;

2. ລາຍງານ ແລະ ເປີດເຜີຍຂໍ້ມູນ ກ່ຽວກັບການຈ່າຍປັນຜົນ ຕາມທີ່ໄດ້ກຳນົດໄວ້ໃນ ຄຳແນະນຳສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ລາຍງານ ກ່ຽວກັບການນຳໃຊ້ເງິນບ້ວງທີ່ບໍ່ຈ່າຍເງິນປັນຜົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ແລະ ເປີດເຜີຍຜ່ານຊ່ອງທາງເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດທຸກໆໄຕມາດ ເປັນຕົ້ນໄປ ຈົນກວ່າຈະນຳໃຊ້ເງິນບ້ວງດັ່ງກ່າວໝົດ;

4. ແຈ້ງຜົນຂອງການຈ່າຍປັນຜົນໃຫ້ແກ່ຜູ້ຖືຮຸ້ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ຕະຫຼາດຫຼັກຊັບ ແຈ້ງຕອບກ່ຽວກັບຜົນສຳເລັດໃນການຈ່າຍປັນຜົນ ເປັນຕົ້ນໄປ;

5. ຊີ້ແຈງເຫດຜົນ ກໍລະນີ ການຈ່າຍປັນຜົນຊັກຊ້າເກີນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງຄຳແນະນຳສະບັບນີ້;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງຜູ້ຖືຮຸ້ນ**

ຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ມີຄຳເຫັນ ຫຼື ຂໍ້ສະເໜີ ກ່ຽວກັບການຈ່າຍປັນຜົນໃນແຕ່ລະຄັ້ງ ເພື່ອນຳສະເໜີຕໍ່ ສະມາຊິກອົດລະພິຈາລະນາ;

2. ໄດ້ຮັບການປັນຜົນຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ຖືຮຸ້ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຈ່າຍປັນຜົນຂອງບໍລິສັດຈົດທະບຽນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຄໍາແນະນໍາສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າສໍານັກງານ**

ສາຍສະໝອນ ຈັນທະຈັກ